# ຖາມຂ່າວນ້ອງສາວຄົນໃໝ່

ເປັນຈັ່ງໃດຄືມິດມ້ອຍ   ນ້ອຍໝຸ່ມສາວຫລັກເຈັດ ນາງເອີຍ
ເປັນຈັ່ງໃດ Grandma   ຊິຍາກຊາຫລາຍບໍ້?
ຄືບໍ່ເຫັນຈາເວົ້າ   ເອົາກອນຖະແຫລງສູ່
ໝູ່ລໍຟັງອ່ານຂໍ້   ບົດເຈົ້າແຕ່ງກອນ ແທ້ໃດ

ຫລືວ່າເຈົ້າເມື່ອຍລ້າ   ກັບຈາກ Reunion ຊັ້ນບໍ
ຫລືວ່າພຽນນຳຫລານ   ເມື່ອຍກາຍແລງເຊົ້າ
ຫລືວ່າຄົນເຂົາເວົ້າ   ຜິດຫູບໍ່ຢາກປາກ
ຫລືວ່າປາກບໍ່ໄດ້   ມີແນວແຄ້ນຄັ່ງໃຈ ຊັ້ນບໍ

ຫລືວ່າເກີດເດືອດຮ້ອນ   ອຸກອັ່ງຈິດໃຈ ບໍນໍ
ຫລືວ່າເປັນສັນໃດ   ໃຫ້ວ່າມາແດ່ແມນ້ອງ
ຫລືມີແນວຂັດຂ້ອງ   ໝອງໃຈອັນໃດແນ່
ບາງທີອ້າຍຊ່ວຍແກ້   ພໍໃຫ້ເຈົ້າສວ່າງໃຈ ນ້ອງເອີຍ

ຄົນເຮົາເຄີຍປາກເວົ້າ   ຮູ້ຂ່າວເປັນປະຈຳ
ອ້າຍຄຶດນຳນາງແພງ   ຢ້ານແຕ່ເຫງົາໃຈເສົ້າ
ຢາກໄດ້ຍິນນາງເວົ້າ   ແຊວໆຄືແຕ່ກ່ອນ
ຢາກໃຫ້ສິກໍ່າກ້ອນ   ຂຽນຂໍ້ຕອບມາ ນ້ອງເອີຍ

ອ້າຍເຄີຍບອກໃຫ້ຮູ້   ເຈົ້າມີໝູ່ຫລວງຫລາຍ ນາງເອີຍ
ເຈົ້ານັ້ນເປັນຄົນດີ   ໝູ່ຄົນນິຍົມຍ້ອງ
ຫລາຍຄົນສາຍຕາຈ້ອງ   ຈັບໃຈເມື່ອໄດ້ພົບ ນາງແຫລ້ວ
ຍາມເຈົ້າຈາປາກຕ້ານ   ໃຜກໍຊ້ອຍຊື່ນໃຈ ແທ້ໃດ

ເຈົ້ານັ້ນກໍສ່ຳນ້ອງ   ຮ່ວມທ້ອງແມ່ດຽວກັນ
ຄວາມສຳພັນເຮົາມີ   ດັ່ງພີ່ຊາຍກັບນ້ອງ
ມີອັນໃດຂັດຂ້ອງ   ຂໍໃຫ້ນາງຈົ່ງບອກພີ່
ຢ່າສູ່ໄປລັບລີ້   ໜີໜ້າແມ່ນບໍ່ດີ ນ້ອງເອີຍ

ພອນສະຫວັນເຈົ້ານັ້ນ ຄືຊຽນກາບຊຽນກອນ ນາງເອີຍ
ອ້າຍອອນຊອນຄຳຈາ ບໍ່ຂ້ອງຄາຄຳເວົ້າ
ມີຫລາຍຄົນເຂົາເວົ້າ ສາວຫລັກເຈັດແຕ່ງກອນເກ່ງ ວ່າຊັ້ນ
ໃຜກໍເລັງໃສ່ເຈົ້າ ໃຫ້ຊຽນຂໍ້ກ່າວກອນ ແທ້ໃດ

ຍາມເມື່ອໃຈເຈົ້າທໍ້ ໃຫ້ຄິດຕໍ່ຊຽນກອນ ນາງເອີຍ
ຈະບັນທອນຄວາມທຸກ ສວ່າງໃຈຫາຍເສົ້າ
ໃຫ້ລອງຟັງພີ່ຊາຍເວົ້າ ອິດເອົາເບິ່ງກອນນີ້ງ
ເຈົ້າຈະໄດ້ຊາບຊຶ້ງ ວ່າຄວາມອ້າຍແມ່ນຈິງ ແທ້ໃດ

ຂໍໃຫ້ເຈົ້າຈົ່ງໄດ້ ປະສົບແຕ່ຄວາມຈະເຣີນ ໃດເນີ
ເຈົ້າຈະເດີນທາງໃດ ພວກພັຍຢ່າມາຕ້ອງ
ມີສິ່ງໃດຂັດຂ້ອງ ໝອງໃຈ ໃຫ້ຫາຍສວ່າງ ສາເດີ
ຂໍໃຫ້ສຸກຢູ່ສ້າງ ນາງນ້ອງຈົ່ງຢູ່ດີ ນ້ອງເອີຍ.

ອ. ຫອມອ່ອນ